ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ພິທີສະຫຼຸບຜົນສຳເລັດການອອກຮຸ້ນກູ້ສະກຸນເງິນບາດຂອງ ຜ-ຟຟລ ໃນປີ 2018-2019

ໃນວັນທີ 7 ມີນາ 2019 ທີ່ໂຮງແຮມ Crowne Plaza, ຜ-ຟຟລ ໄດ້ຈັດພິທີສະຫຼຸບຜົນສຳເລັດການອອກຮຸ້ນກູ້ສະກຸນເງິນບາດມູນຄ່າ 17.500 ລ້ານບາດ ສຳລັບປີ 2018-2019 ທີ່ປະເທດໄທ. ຜົນສຳເລັດດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງຄວາມໜ້າເຊື່ອຖືຂອງບໍລິສັດທີ່ເຮັດໃຫ້ນັກລົງທຶນຕ່າງຊາດມີຄວາມເຊື່ອໝັ້ນທີ່ຈະຮ່ວມລົງທຶນກັບການຂະຫຍາຍທຸລະກິດຂອງ ຜ-ຟຟລ, ໂດຍເປັນການອອກຮຸ້ນທີ່ບໍ່ມີລັດຖະບານຄ້ຳປະກັນ ກໍເພື່ອຫຼຸດຜ່ອນພາລະແບກຫາບຂອງທາງພັກ-ລັດ. ໂດຍໃຫ້ກຽດເປັນປະທານການຖະແຫຼງຂ່າວໂດຍ ທ່ານ ປອ ຄຳມະນີ ອິນທິລາດ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ແລະທັງເປັນປະທານສະພາບໍລິຫານ ຜ-ຟຟລ, ບັນດາການນຳຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ສື່ມວນຊົນ ກໍໃຫ້ກຽດເປັນສັກຄີພະຍານໃນງານທີ່ມີກຽດຄັ້ງນີ້ດ້ວຍ. ງານນີ້ ຍັງໄດ້ ຍົກໃຫ້ເຫັນຜົນງານ 4 ລາງວັນທີ່ຜ-ຟຟລໄດ້ ຮັບ ຄື: ລາງວັນ The Asset Triple A Country Award ປະຈຳປີ 2018, ໃນສາຂາ Best Corporate Bond for EDL-Generation’s Bt13.66 billion baht bond, ລາງວັນ FinanceAsia Achievement Awards ປະຈຳປີ 2018, ໃນສາຂາ Best Laos Deal, EDL-Generation’s 13,7 Billion baht ($410 million) multi-tranche bond, ລາງວັນ ThaiBMA Award ປະຈຳປີ 2018, ໃນສາຂາ Distinguished Issuer Award ແລະ ລາງວັນ Best Deal & Solution Awards ປະຈຳປີ 2018, ໃນສາຂາ Best Foreign Currency Sovereign Bond Deal In Southeast Asia 2018.









ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392

ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັໄຊທ໌:www.edlgen.com.la